هل سألت نفسك؟ من خلقك؟ ولماذا؟

وماذا بعد الموت؟ (للجمعية)

ເຈົ້າເຄີຍຖາມຕົວເອງບໍ່?

ໃຜແມ່ນຜູ້ສ້າງໂຕເຈົ້າ?

ແລ້ວສ້າງມາເພື່ອຫຍັງ?

ແລ້ວຈະມີຫຍັງເກີດຂຶ້ນຫລັງຈາກຄ

ວາມຕາຍ?

**ເຈົ້າເຄີຍຖາມຕົວເອງບໍ່? ໃຜແມ່ນຜູ້ສ້າງໂຕເຈົ້າ? ແລ້ວສ້າງມາເພື່ອຫຍັງ? ແລ້ວຈະມີຫຍັງເກີດຂື້ນຫລັງຈາກຄວາມຕາຍ?**

ຄະນະກຳມະການວິຊາການ ປະຈຳສະມາຄົມບໍລິການຄົ້ນຄ້ວເນື້ອຫາອິສລາມ ໃນພາສາຕ່າງໆ

**ເຈົ້າເຄີຍຖາມຕົວເອງບໍ່? ໃຜແມ່ນຜູ້ສ້າງໂຕເຈົ້າ? ແລ້ວສ້າງມາເພື່ອຫຍັງ? ແລ້ວຈະມີຫຍັງເກີດຂື້ນຫລັງຈາກຄວາມຕາຍ?**

ຄະນະກຳມະການວິຊາການ ປະຈຳສະມາຄົມບໍລິການຄົ້ນຄ້ວເນື້ອຫາອິສລາມ ໃນພາສາຕ່າງໆ

ໃຜແມ່ນຜູ້ສ້າງໂຕເຈົ້າ ໂອ້ມະນຸດເອີຍ? ຖ້າຫາກເຈົ້າສ່ອງເບິ່ງຮ່າງກາຍຂອງເຈົ້າພາຍໃຕ້ກ້ອງຈຸລະທັດ , ເຈົ້າຈະເຫັນໂລກແຫ່ງຄວາມແມ່ນຍໍາ ແລະ ຄວາມມະຫັດສະຈັນ, ເພາະທຸກ ໆ ຈຸລັງໃນຮ່າງກາຍຂອງເຈົ້າບັນຈຸຂໍ້ມູນທາງກຳມະພັນທີ່ມີລະຫັດອັນຊັບຊ້ອນ.

ເຈົ້າເຄີຍຖາມໂຕເອງບໍ່ວ່າ ໃຜເປັນຜູ້ຂຽນລະຫັດເຫຼົ່ານີ້? ແລະ ໃຜແມ່ນຜູ້ວາງມັນໄວ້ໃນຕຳແໜ່ງທີ່ຖືກຕ້ອງ?

ທຸກໆ ສິ່ງປຸກສ້າງທີ່ສູງໃຫຍ່ ແລະ ທຸກໆ ເຮືອນສານທີ່ລຽບງ່າຍ ລ້ວນຊີ້ໃຫ້ເຫັນເຖິງຜູ້ສ້າງຂອງມັນ; ແລ້ວມັນຈະເປັນໄປໄດ້ແນວໃດທີ່ຈັກກະວານອັນກວ້າງໃຫຍ່ໄພສານນີ້ ພ້ອມດ້ວຍຄວາມສວຍງາມ, ຄວາມລະອຽດຮັດກຸມ

ແລະ ຄວາມເປັນລະບຽບໃນທຸກລາຍລະອຽດຂອງມັນຈະເກີດຂຶ້ນມາໂດຍບໍ່ມີຜູ້ສ້າງ?

ໂອ້ ມະນຸດເອີຍ, ເມື່ອສະຕິປັນຍາຂອງເຈົ້າບໍ່ອາດຍອມຮັບໄດ້ວ່າ: ໂທລະສັບມືຖືອັດສະລິຍະທີ່ຖືກສ້າງຂຶ້ນຢ່າງປານີດນັ້ນເກີດຂຶ້ນມາເອງໂດຍປາສະຈາກຜູ້ອອກແບບ ແລະ ຜູ້ຜະລິດ, ຫຼື ເຄືອຂ່າຍອຸປະກອນທີ່ຊັບຊ້ອນທີ່ເຮັດວຽກຢ່າງສອດຄ່ອງ ແລະ ແມ່ນຍໍານັ້ນມີຂຶ້ນໂດຍປາດສະຈາກຜູ້ຂຽນໂປຣແກຣມ ຫຼື ຜູ້ຄວບຄຸມ, ແລ້ວສະຕິປັນຍາຈະຍອມຮັບໄດ້ແນວໃດວ່າ: ຈັກກະວານອັນຍິ່ງໃຫຍ່ນີ້ ພ້ອມດ້ວຍລະບຽບ, ຄວາມສ້າງສັນ, ກົດເກນທີ່ລະອຽດອ່ອນ ແລະ ລະບົບອັນປານີດທັງໝົດທີ່ມີຢູ່ໃນນັ້ນ ເກີດຂຶ້ນມາໂດຍປາສະຈາກຜູ້ສ້າງ?

ທຸກໆ ສິ່ງໃນຈັກກະວານນີ້, ຕັ້ງແຕ່ອະນຸພາກທີ່ນ້ອຍທີ່ສຸດຈົນເຖິງກາແລັກຊີທີ່ໃຫຍ່ທີ່ສຸດ, ລ້ວນເປັນສິ່ງທີ່ຊີ້ບອກເຖິງຄວາມຍິ່ງໃຫຍ່ຂອງຜູ້ສ້າງ. ເປັນໄປບໍ່ໄດ້ ທີ່ສະຕິປັນຍາທີ່ມີລະບົບອັນລະອຽດຮັດກຸມນີ້ຈະເກີດຂຶ້ນມາຈາກຄວາມວຸ່ນວາຍ, ສະຕິປັນຍາທີ່ສົມບູນຍ່ອມບໍ່ຍອມຮັບວ່າຈັກກະວານນີ້ເກີດຂຶ້ນມາຈາກຄວາມວ່າງເປົ່າ, ຫຼື ຍອມຮັບວ່າລະບົບອັນສວຍງາມທີ່ຊັບຊ້ອນນີ້ເປັນພຽງຜົນຂອງຄວາມບັງເອີນທີ່ມືດບອດ

ເຊັ່ນດຽວກັບທີ່ສະຕິປັນຍາ ແລະ ທໍາມະຊາດອັນດີງາມນໍາພາມະນຸດໄປສູ່ການສັດທາໃນການມີ

ຢູ່ຂອງພຣະຜູ້ສ້າງ,
ທັງສອງສິ່ງນີ້ກໍຍັງຊຸກຍູ້ໃຫ້ເຮົາພິຈາລະນາເຖິງຄຸນລັກສະນະຂອງພຣະຜູ້ສ້າງ ແລະ ສິດທິຂອງພຣະອົງທີ່ມີຕໍ່ເຮົາ.

ການພິຈາລະນາໃນຄຸນລັກສະນະຂອງຜູ້ສ້າງ ເຮັດໃຫ້ພວກເຮົາເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມຈໍາເປັນທີ່ພຣະອົງຕ້ອງມີຄວາມສົມບູນແບບຢ່າງແທ້ຈິງ ແລະ ເປັນໄປບໍ່ໄດ້ທີ່ພຣະອົງຈະມີຄຸນລັກສະນະທີ່ບໍ່ສົມບູນ.

ນີ້ໝາຍຄວາມວ່າ ຜູ້ຊົງສ້າງນັ້ນຊົງປະກອບດ້ວຍທຸກຄຸນລັກສະນະແຫ່ງຄວາມສວຍງາມ ແລະ ຄວາມຍິ່ງໃຫຍ່, ເພາະພຣະອົງ ຜູ້ຊົງມະຫາບໍລິສຸດ ຄືຜູ້ຊົງມີຄວາມສາມາດເໜືອທຸກສິ່ງ, ຜູ້ຊົງຮອບຮູ້ໃນທຸກສິ່ງ, ຜູ້ຊົງປຣີຊາໃນທຸກສິ່ງທີ່ພຣະອົງໄດ້ສ້າງ ແລະ ກໍານົດໄວ້. ຄວາມສົມບູນແບບນີ້ບໍ່ແມ່ນພຽງແຕ່ຄວາມເປັນໄປໄດ້ ແຕ່ເປັນສິ່ງຈໍາເປັນທາງດ້ານສະຕິປັນຍາ, ເພາະວ່າຄວາມບົກພ່ອງໃດໆ ໃນພຣະຄຸນລັກສະນະຂອງພຣະອົງ ຈະນໍາໄປສູ່ຄວາມຜິດພາດໃນການສ້າງ ແລະ ການບໍລິຫານຈັດການ, ເຊິ່ງມັນຂັດແຍ້ງກັບຄວາມລະອຽດຮອບຄອບທີ່ພວກເຮົາເຫັນໃນຈັກກະວານ.

ເຊັ່ນດຽວກັນ, ການທີ່ພຣະອົງປາດສະຈາກຄວາມບົກພ່ອງນັ້ນ; ໝາຍຄວາມວ່າ ພຣະຜູ້ສ້າງຈະຕ້ອງບໍ່ຕ້ອງການເພິ່ງພາສິ່ງທີ່ພຣະອົງສ້າງ.

ພຣະອົງບໍ່ຕ້ອງການຜູ້ໃດ, ແຕ່ທຸກສັບພະສິ່ງລ້ວນຕ້ອງການພຣະອົງໃນການກຳເນີດ ແລະ ການດຳລົງຢູ່. ແລະ ພຣະອົງນັ້ນປາສະຈາກການມີຄູ່ຄອງ ແລະ ລູກ, ເພາະສິ່ງເຫຼົ່ານັ້ນເປັນສັນຍານຂອງການຂາດຄວາມສົມບູນ ແລະ ຄວາມອ່ອນແອ. ແລະ ອັລລໍຮ໌ນັ້ນປາດສະຈາກສິ່ງທັງໝົດເຫຼົ່ານັ້ນ.

ເມື່ອອັລລໍຫ໌ຄືພຣະຜູ້ສ້າງຜູ້ຊົງຍິ່ງໃຫຍ່, ຜູ້ຊົງມີຄຸນລັກສະນະແຫ່ງຄວາມສົມບູນ ແລະ ຄວາມຍິ່ງໃຫຍ່, ພຣະອົງຄືຜູ້ທີ່ສ້າງພວກເຮົາ ແລະ ຈັກກະວານຂຶ້ນມາຈາກຄວາມບໍ່ມີ, ພຣະອົງເປັນເຈົ້າຂອງທຸກສິ່ງທຸກຢ່າງທີ່ຢູ່ໃນນັ້ນ, ພຣະອົງຄືຜູ້ທີ່ປະທານປັດໄຈຍັງຊີບໃຫ້ແກ່ພວກເຮົາ ແລະ ປົກຄຸມພວກເຮົາດ້ວຍຄວາມເມດຕາຂອງພຣະອົງ, ແລະ ພຣະອົງຄືຜູ້ປົກຄອງ ແລະ ຈັດການທຸກສິ່ງທຸກຢ່າງ; ມັນບໍ່ສົມຄວນແລ້ວບໍທີ່ພວກເຮົາຈະຕ້ອງສະແດງຄວາມຂອບຄຸນຕໍ່ພຣະອົງ, ສະແຫວງຫາວິທີການທີ່ຈະໄດ້ຮັບຄວາມພໍໃຈຈາກພຣະອົງ, ປະຕິບັດໜ້າທີ່ອັນຈຳເປັນທີ່ເຮົາຕ້ອງມີຕໍ່ພຣະອົງ ແລະ ປະຕິບັດເພື່ອໃຫ້ບັນລຸເຖິງຈຸດປະສົງທີ່ພຣະອົງໄດ້ສ້າງພວກເຮົາຂຶ້ນມາເພື່ອມັນ?

ມັນສົມເຫດສົມຜົນບໍ່ ທີ່ອັລລໍຫ໌ຈະສ້າງເຮົາມາແລ້ວບໍ່ຊີ້ແຈງໃຫ້ເຮົາຮູ້ວ່າພຣະອົງຕ້ອງການຫຍັງຈາກເຮົາ? ເປັນຫຍັງເຮົາຈຶ່ງຢູ່ບ່ອນນີ້? ແມ່ນຫຍັງຄືຈຸດປະສົງ ແລະ

ເປົ້າໝາຍໃນການດຳລົງຊີວິດຢູ່ຂອງເຮົາ?
ຈະເກີດຫຍັງຂຶ້ນກັບເຮົາຫຼັງຈາກຄວາມຕາຍ?

ລອງຄິດຕາມເບິ່ງວ່າ
ຖ້າຫາກມີຄົນຜູ້ໜຶ່ງໄດ້ສ້າງພະລາດຊະວັງອັນຫຣູຫລາ, ພ້ອມທັງຕິດຕັ້ງດ້ວຍເທັກໂນໂລຢີທີ່ທັນສະໄໝທີ່ສຸດ, ແຕ່ເມື່ອສ້າງສຳເລັດແລ້ວ, ລາວກໍກັບທຳລາຍມັນລົງທັງໝົດໂດຍບໍ່ມີເຫດຜົນ, ເຮົາຈະຖືວ່າຄົນຜູ້ນີ້ເປັນຜູ້ມີປັນຍາໄດ້ບໍ່? ການກະທຳເຊັ່ນນີ້ບໍ່ແມ່ນການກະທຳແບບຫລິ້ນໆ ທີ່ບໍ່ສົມຄວນກັບຜູ້ມີສະຕິປັນຍາດອກບໍ?

ໃນເມື່ອການກະທຳເຊັ່ນນີ້ເປັນສິ່ງທີ່ຍອມຮັບບໍ່ໄດ້ສຳລັບມະນຸດ, ແລ້ວເປັນໄປໄດ້ແນວໃດທີ່ພຣະອົງຜູ້ຊົງປັນຍາ ຜູ້ຮອບຮູ້ ຈະສ້າງຈັກກະວານອັນສວຍງາມນີ້ຂຶ້ນມາຢ່າງສົມບູນແບບ ແລ້ວທຳລາຍມັນຖິ້ມໂດຍບໍ່ມີເປົ້າໝາຍ ຫຼື ປັນຍາໃດໆ?

ພຣະເຈົ້າອັລລໍຫ໌ໄດ້ຊົງສ້າງມະນຸດຂຶ້ນມາເພື່ອປະສົງອັນຍິ່ງໃຫຍ່, ນັ້ນກໍ່ຄືການເຄົາລົບບູຊາພຣະອົງພຽງອົງດຽວ ໂດຍບໍ່ຕັ້ງສິ່ງໃດເປັນພາຄີຮ່ວມກັບພຣະອົງ, ແລະ ພຣະອົງໄດ້ສ້າງພວກເຂົາຂຶ້ນມາ ເພື່ອທົດສອບພວກເຂົາບົນໂລກນີ້, ແລະ ໄດ້ກຳນົດວັນເວລາໜຶ່ງໄວ້ໃຫ້ແກ່ພວກເຂົາ ເຊິ່ງພວກເຂົາຈະຖືກຟື້ນຄືນຊີບໃນວັນກິຍາມະຮ໌ ເພື່ອທີ່ຈະຖືກສອບສວນກ່ຽວກັບການກະທຳຂອງພວກເຂົາ; ດັ່ງນັ້ນ ຜູ້ໃດທີ່ສັດທາຕໍ່ອັລລໍຫ໌ ແລະ ຕອບຮັບການຮຽກຮ້ອງຂອງພຣະອົງ

ຜູ້ນັ້ນກໍ່ຈະໄດ້ຮັບຄວາມສຸກສໍາລານໃນສວນສະຫວັນ ແລະ ຈະໄດ້ພໍານັກຢູ່ໃນນັ້ນຕະຫຼອດການ, ແລະ ຜູ້ໃດທີ່ຫັນຫຼັງໃຫ້ແກ່ສັດຈະທໍາ ກໍ່ຈະເປັນຊາວນາລົກ.

ການເຄົາລົບສັກກາລະບູຊາເປັນພັນທະທີ່ຈໍາເປັນເໜືອພວກເຮົາ
ເພາະມັນຄືເປົ້າໝາຍສູງສຸດໃນການດໍາລົງຢູ່ຂອງພວກເຮົາ, ແລະ ມັນເປັນເຄື່ອງຢັ້ງຢືນເຖິງການຂອບພຣະຄຸນ ແລະ ການຍອມຮັບຂອງພວກເຮົາຕໍ່ຄວາມເປັນພຣະຜູ້ອະພິບານຂອງອັລລໍຫ໌ ແລະ ອຸລູຮິຍະຫ໌ຂອງພຣະອົງ.

ຈົ່ງໃຕ່ຕອງເຖິດວ່າ ອັລລໍຫ໌ ຊົງເປັນຜູ້ສ້າງເຈົ້າ ແລະ ໄດ້ປະທານການໄດ້ຍິນ ແລະ ການເບິ່ງເຫັນໃຫ້ແກ່ເຈົ້າ, ແລະ ໄດ້ອ້ອມຮອບເຈົ້າໄວ້ດ້ວຍປັດໄຈຕ່າງໆ ທີ່ນັບບໍ່ຖ້ວນ, ພຣະອົງຄືຜູ້ຫມູນວຽນລະບົບເລືອດໃນຮ່າງກາຍຂອງເຈົ້າ, ແລະ ປະທານນໍ້າ ແລະ ອາກາດໃຫ້ແກ່ເຈົ້າ, ແລະ ໃນທຸກ ໆ ເວລາ ເຈົ້າກໍຕ້ອງການເພິ່ງພາພຣະອົງ, ຫາກບໍ່ແມ່ນຄວາມເມດຕາ ແລະ ການດູແລຂອງພຣະອົງແລ້ວ, ເຈົ້າຄົງຈະດັບສູນ ແລະ ຄວາມເຂັ້ມແຂງຂອງເຈົ້າກໍຈະສູນສິ້ນໄປ. ຍິ່ງໄປກວ່ານັ້ນ ພຣະອົງ ຊົງຮັບປະກັນປັດໄຈຍັງຊີບຂອງເຈົ້າ ຂະນະທີ່ເຈົ້າເປັນພຽງຕົວອ່ອນຢູ່ໃນທ້ອງຂອງແມ່, ໃນສະພາບທີ່ເຈົ້າອ່ອນແອ ແລະ ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ເລີຍ.

ພຣະຜູ້ສ້າງຜູ້ຊົງຍິ່ງໃຫຍ່ນີ້ ບໍ່ສົມຄວນດອກບໍ ທີ່ເຮົາຈະຕ້ອງເຄົາລົບບູຊາພຣະອົງຕາມທີ່ພຣະອົງປະສົງຕ້ອງການ, ບໍ່ແມ່ນຕາມທີ່ເຮົາຕ້ອງການ?!

ລອງໄຕ່ຕອງເບິ່ງວ່າ ຫາກເຈົ້າຕ້ອງການມອບຂອງຂວັນໃຫ້ແມ່ຂອງເຈົ້າ, ເຈົ້າຈະເລືອກສິ່ງທີ່ຖືກໃຈເຈົ້າ ຫຼື ຈະພະຍາຍາມຊອກຮູ້ວ່າແມ່ຂອງເຈົ້າມັກຫຍັງ ເພື່ອເຮັດໃຫ້ເພິ່ນມີຄວາມສຸກກັບສິ່ງທີ່ເໝາະສົມກັບເພິ່ນ?

ເຊັ່ນດຽວກັນ ການເຄົາລົບບູຊາອັລລໍຮ໌ ຊຸບຫານະຮຸ ວະຕະອາລາ ກໍບໍ່ຄວນທີ່ຈະເປັນໄປຕາມອາລົມຄວາມມັກຂອງເຮົາ ຫຼື ຕາມຮີດຄອງປະເພນີທີ່ສືບທອດກັນມາ, ແຕ່ຕ້ອງເປັນໄປຕາມທີ່ພຣະອົງ ຊຸບຫານະຮຸ ຕະອາລາ ລິງປະສົງ ແລະ ຕາມຮູບແບບທີ່ພຣະອົງໄດ້ບັນຊາເຮົາໄວ້.

ການເຄົາລົບບູຊາຕ້ອງມີຄວາມບໍລິສຸດໃຈຕໍ່ອັລລໍຫ໌ພຽງຜູ້ດຽວ ໂດຍບໍ່ຕັ້ງສິ່ງໃດເປັນພາຄີກັບພຣະອົງ, ດັ່ງນັ້ນ ມະນຸດຈຶ່ງບໍ່ໄດ້ຮັບອະນຸຍາດໃຫ້ອຸທິດການເຄົາລົບບູຊາໃຫ້ກັບສິ່ງອື່ນນອກເໜືອຈາກພຣະຜູ້ສ້າງຂອງຕົນ. ແລະ ບາບທີ່ໃຫຍ່ທີ່ສຸດທີ່ເປັນເຫດໃຫ້ຕ້ອງຢູ່ໃນໄຟນະລົກຕະຫຼອດການກໍຄື ການຕັ້ງພາຄີຕໍ່ອັລລໍຫ໌, ນັ້ນຄືການທີ່ມະນຸດເຄົາລົບບູຊາສິ່ງອື່ນທີ່ບໍ່ແມ່ນອັລລໍຫ໌ ເຊິ່ງເປັນສິ່ງທີ່ພຣະອົງສ້າງຂຶ້ນມາ ເຊັ່ນ: ການບູຊາຮູບປັ້ນ, ດວງຕາເວັນ ຫຼື ດວງເດືອນ, ຫຼື ການບູຊາມະນຸດ, ສັດ ຫຼື ບຸກຄົນທີ່ລິງຄຸນນະທຳ. ທັງໝົດເຫຼົ່ານັ້ນລ້ວນເປັນຮູບແບບຂອງການຕັ້ງພາຄີ (ຊິຣິກ) ແລະ ການປະຕິເສດສັດທາ (ກຸຟຣ໌), ແລະ ຜູ້ໃດທີ່ເສຍຊີວິດໃນສະພາບດັ່ງກ່າວ

ການຕອບແທນຂອງເຂົາກໍ່ຄືການຢູ່ໃນໄຟນະລົກ ຕະຫຼອດໄປເປັນນິລັນດອນ.

ອັລລໍຫ໌ໄດ້ສົ່ງບັນດາສາດສະດາທູດຈຳນວນຫຼວງຫຼາຍມາເພື່ອບອກພວກເຮົາກ່ຽວກັບເປົ້າໝາຍຂອງການມີຊີວິດຢູ່ໃນໂລກນີ້ ແລະ ຈຸດປະສົງຂອງການດຳລົງຊີວິດ, ແລະ ສາດສະດາທູດທຸກທ່ານກໍ່ມີຄຳສອນເປັນອັນໜຶ່ງອັນດຽວກັນນັ້ນກໍ່ຄືຄຳສອນຂອງສາສະໜາອິສລາມ ແລະ ການຮຽກຮ້ອງເຊີນຊວນໄປສູ່ການເຄົາລົບບູຊາພຣະຜູ້ສ້າງພຽງອົງດຽວ ໂດຍບໍ່ມີການຕັ້ງສິ່ງໃດເປັນຄູ່ຮ່ວມກັບພຣະອົງ.

ແຕ່ກໍ່ມີຜູ້ທີ່ບິດເບືອນ ແລະ ປ່ຽນແປງສິ່ງທີ່ບັນດາສາດສະດາທູດໃນຍຸກກ່ອນໄດ້ນຳມາ, ດັ່ງນັ້ນ ອັລລໍຫ໌ຈຶ່ງໄດ້ສົ່ງສາດສະດາທູດທ່ານສຸດທ້າຍຄືທ່ານມຸຮັມມັດ ແລະ ໄດ້ປະທານຄຳສອນເລັ່ມສຸດທ້າຍແກ່ມວນມະນຸດຊາດ ນັ້ນກໍ່ຄືຄຳພີອັລກູຣອານ.

ແລະ ມີຫຼັກຖານທາງດ້ານສະຕິປັນຍາ ແລະ ວິທະຍາສາດຢ່າງຫຼວງຫຼາຍທີ່ພິສູດວ່າຄຳພີອັລກູຣອານນັ້ນເປັນພຣະດຳລັດຂອງອັລລໍຫ໌, ແລະ ເປັນຄຳພີສະບັບດຽວເທົ່ານັ້ນທີ່ບໍ່ຖືກບິດເບືອນ ຫຼື ປ່ຽນແປງ.

ແລະ ອັລລໍຫ໌ໄດ້ຊີ້ງບອກພວກເຮົາໄວ້ໃນຄຳພີອັລກູຣອານວ່າ ພຣະອົງຈະບໍ່ຊົງຮັບສາສະໜາໃດໆ ຈາກມະນຸດນອກຈາກສາສະໜາອິສະລາມ, ແລະ ບັນດາສາດສະດາທູດທຸກທ່ານກໍ່ມີຄຳສອນເປັນອັນໜຶ່ງອັນດຽວກັນ:

ນັ້ນຄືການຮຽກຮ້ອງໄປສູ່ການໃຫ້ເອກະພາບຕໍ່ພຣະຜູ້ສ້າງ ແລະ ເຄົາລົບບູຊາພຣະອົງພຽງອົງດຽວ ໂດຍບໍ່ມີສິ່ງໃດເປັນຄູ່ຮ່ວມ.

ແລະ ອັລລໍຫ໌ໄດ້ຊີ້ງບອກພວກເຮົາໄວ້ໃນຄຳພີອັລກູຣອານວ່າ ມີສວນສະຫວັນ ແລະ ຄວາມສຸກສຳລານອັນເປັນນິລັນດອນ ເຊິ່ງຈະເປັນຂອງບັນດາຜູ້ສັດທາ, ແລະ ມີໄຟນະຣົກ ແລະ ການລົງໂທດອັນເຈັບປວດແສນສາຫັດ ສຳລັບຜູ້ທີ່ເຄົາລົບບູຊາສິ່ງອື່ນນອກເໜືອຈາກອັລລໍຫ໌ ຫຼື ຜູ້ທີ່ປະຕິເສດທີ່ຈະເຂົ້າຮັບນັບຖືສາສະໜາອິສະລາມ.

ສິ່ງທີ່ເຮັດໃຫ້ສາສະໜາອິສລາມແຕກຕ່າງຈາກສາສະໜາອື່ນໆ ກໍຄື ຊາວມຸສລິມເປັນກຸ່ມຄົນດຽວທີ່ສາມາດນຳສະເໜີຫຼັກຖານທາງດ້ານເຫດຜົນ ແລະ ຂໍ້ເທັດຈິງທາງວິທະຍາສາດ, ໂດຍອີງໃສ່ແຫຼ່ງຄວາມຮູ້ທີ່ເຊື່ອຖືໄດ້, ເພື່ອພິສູດວ່າຄຳພີອັລກຸຣອານທີ່ຢູ່ໃນມືຂອງພວກເຂົາໃນທຸກມື້ນີ້ ແມ່ນດຳລັດຂອງອັລລໍຮ໌ ຜູ້ສ້າງ ຜູ້ຊົງສູງສົ່ງ, ທີ່ຖືກຮັກສາເອົາໄວ້, ຈາກການປ່ຽນແປງ ແລະ ການບິດເບືອນ.

ຄຳພີອັລກຸຣອານຄືຄຳພີທີ່ອັລລໍຮ໌ໄດ້ປະທານແກ່ທ່ານນະບີມຸຮັມຫມັດ ຊໍລລັລລໍຮຸ ອະໄລຮິ ວະຊັລລໍາ, ພຣະອົງອັລລໍຫ໌ໄດ້ທ້າທາຍມວນມະນຸດມາເປັນເວລາກວ່າສິບສີ່ສັດຕະວັດໃຫ້ສ້າງສິ່ງທີ່ທຽບເທົ່າຂຶ້ນມາ, ຫຼື ແມ້ແຕ່ພຽງບົດດຽວທີ່ຄືກັນ ແຕ່ພວກເຂົາກໍບໍ່ສາມາດເຮັດໄດ້.

ແລະການທ້າທາຍນັ້ນຍັງຄົງຢູ່ຈົນເຖິງທຸກມື້ນີ້ ໂດຍທີ່ບໍ່ມີຜູ້ໃດສາມາດສ້າງສິ່ງທີ່ທຽບເທົ່າໄດ້ ທັງໃນດ້ານສຳນວນໂວຫານ, ຄວາມຊັດເຈນ, ຄວາມມະຫັດສະຈັນ, ແລະ ຫຼັກການບັນຍັດຕ່າງໆ.

ເຖິງຢ່າງໃດກໍຕາມ, ຕະຫຼອດທຸກຍຸກທຸກສະໄໝກໍບໍ່ມີຜູ້ໃດສາມາດສ້າງສິ່ງທີ່ຄືກັນ ຫຼື ແມ້ແຕ່ໃກ້ຄຽງໄດ້. ແລະຄວາມມະຫັດສະຈັນໃນຄຳພີອັລກຸຣອານບໍ່ໄດ້ມີພຽງແຕ່ໃນດ້ານພາສາທີ່ໃຊ້ສຳນວນໂວຫານອັນສູງສົ່ງ ແລະ ຊັດເຈນເທົ່ານັ້ນ, ແຕ່ຍັງລວມໄປເຖິງຫຼັກຖານທາງດ້ານເຫດຜົນ ແລະ ວິທະຍາສາດທີ່ຢືນຢັນວ່ານີ້ຄືຄຳເວົ້າຂອງອັລລໍຫ໌.

ເມື່ອຄຳພີອັລກຸຣອານມີຫຼັກຖານອັນຊັດເຈນທີ່ພິສູດວ່າເປັນຄຳເວົ້າຂອງອັລລໍຫ໌ແລ້ວ, ດັ່ງນັ້ນ, ການກະທຳທີ່ສົມເຫດສົມຜົນ ແລະ ມີຫຼັກການກໍຄືການສັດທາຕໍ່ຄຳພີເຫຼັ້ມນີ້ ແລະປະຕິບັດຕາມສິ່ງທີ່ຖືກກ່າວໄວ້ໃນນັ້ນ, ແທນທີ່ຈະໄປອີງໃສ່ຄຳພີອື່ນໆ ທີ່ໄດ້ຮັບອິດທິພົນຈາກການແຊກແຊງຂອງມະນຸດໃນການປະພັນຂຶ້ນມາ.

ສະຕິປັນຍາທີ່ສົມບູນຍ່ອມນຳພາເຮົາໄປສູ່ການຍອມຮັບວ່າ ຄຳເວົ້າຂອງພຣະຜູ້ສ້າງ, ຜູ້ທີ່ໄດ້ສ້າງສັນຈັກກະວານ ແລະ ວາງລະບົບຂອງມັນໄວ້ຢ່າງສົມບູນ, ຄືແຫຼ່ງທີ່ມາອັນຈິງແທ້ທີ່ສຸດເພື່ອການຮັບຮູ້ຄວາມຈິງ.

ແລະ
ເມື່ອເຮົາພົບວ່າໃນຄຳພີອັລກຸຣອານນັ້ນມີທັງຄວາມອັດສະຈັນທາງດ້ານພາສາ, ບັນດາຂໍ້ເທັດຈິງທາງວິທະຍາສາດ, ແລະ ລະບົບບັນຍັດຕ່າງໆ ທີ່ຄົບຖ້ວນສົມບູນ, ຍິ່ງໄປກວ່ານັ້ນ ຍັງໄດ້ຮັບການປົກປ້ອງຮັກສາຈາກການບິດເບືອນຕະຫຼອດມາ,
ຈຶ່ງເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້ທີ່ຈະຕ້ອງຍອມຮັບວ່ານີ້ຄືຄຳເວົ້າຂອງອັລລໍຫ໌.

ດັ່ງນັ້ນ,
ການສັດທາຕໍ່ສິ່ງທີ່ຖືກກ່າວໄວ້ໃນຄັມພີອັລກຸຣອານຈຶ່ງບໍ່ແມ່ນພຽງແຕ່ທາງເລືອກດ້ານຄວາມເຊື່ອເທົ່ານັ້ນ,
ແຕ່ຫາກເປັນການຕັດສິນໃຈທີ່ອີງໃສ່ປັນຍາ
ເຊິ່ງສອດຄ່ອງກັບຫຼັກເຫດຜົນໃນການສະແຫວງຫາຄວາມຈິງ.

ອັລລໍຣ໌ ຊົງໄດ້ຊີ້ແຈງໄວ້ໃນພຣະມະຫາຄຳພີອັລກຸຣອານວ່າ ພຣະອົງບໍ່ໄດ້ສ້າງເຮົາຂຶ້ນມາໂດຍບໍ່ມີປະໂຫຍດ,
ຫາກແຕ່ພຣະອົງຊົງສ້າງເຮົາມາເພື່ອການເຄົາລົບບູຊາພຣະອົງ.

ແລະ ອັລລໍຣ໌ໄດ້ບອກເຮົາໃນຄຳພີກຸຣອານວ່າ ແທ້ຈິງແລ້ວ ຊີວິດໃນໂລກນີ້ທີ່ພວກເຮົາກຳລັງດຳລົງຢູ່ນັ້ນ
ເປັນພຽງແຕ່ໄລຍະເວລາຊົ່ວຄາວສັ້ນໆ ທີ່ຈະສິ້ນສຸດລົງໃນໄວໆນີ້, ແຕ່ຊີວິດທີ່ແທ້ຈິງ ແລະ ເປັນນິລັນດອນນັ້ນແມ່ນຊີວິດໃນໂລກໜ້າ
ເມື່ອບັນດາຜູ້ສັດທາໄດ້ເຂົ້າສະຫວັນ ແລະ ບັນດາຜູ້ປະຕິເສດສັດທາໄດ້ເຂົ້ານາຣົກ.

ພຣະຜູ້ສ້າງ ຜູ້ທີ່ໄດ້ສ້າງພວກເຮົາຈາກຄວາມບໍ່ມີວ່າງເປົ່າ ຍ່ອມຊົງສາມາດຢ່າງແນ່ນອນທີ່ຈະໃຫ້ພວກເຮົາມີຊີວິດຄືນຫຼັງຈາກຄວາມຕາຍ, ແລະ ໃນບັນດາສັນຍານຕ່າງໆຂອງອັລລໍຫ໌ທີ່ຢູ່ອ້ອມຮອບຕົວເຮົາໃນຈັກກະວານນີ້, ເຮົາໄດ້ເຫັນຫຼັກຖານທີ່ເປັນຮູບປະທຳເຖິງຄວາມສາມາດອັນໄຮ້ຂີດຈຳກັດຂອງພຣະອົງໃນການໃຫ້ຊີວິດແກ່ສິ່ງທີ່ຕາຍໄປແລ້ວ; ດັ່ງທີ່ພຣະອົງຊົງນຳເອົາໄຟອອກຈາກຕົ້ນໄມ້ທີ່ຂຽວສົດ (ໝາຍເຖິງການຈຸດໄຟຈາກກິ່ງກ້ານໃບໄມ້ທີ່ຍັງມີນ້ຳຢູ່), ແລະ ຊົງນຳເອົາພືດພັນ ແລະ ໝາກໄມ້ອອກຈາກແຜ່ນດິນທີ່ແຫ້ງແລ້ງ (ໝາຍເຖິງການເຮັດໃຫ້ພືດເຕີບໃຫຍ່ບົນພື້ນດິນທີ່ເບິ່ງຄືບໍ່ສາມາດຈະມີຊີວິດໄດ້) , ແລະ ຊົງສ້າງຕົວອ່ອນໃນຄັນຂອງມານດາຈາກເຊື້ອອະສຸຈິພຽງຢົດດຽວ, ພຣະອົງຜູ້ຊົງມະຫາບໍລິສຸດ ຜູ້ຊົງສູງສົ່ງກໍຍ່ອມຊົງສາມາດທີ່ຈະໃຫ້ຜູ້ທີ່ຕາຍໄປແລ້ວຟື້ນຄືນຊີບ ແລະ ໃຫ້ພວກເຂົາອອກຈາກຫລຸມຝັງສົບຂອງພວກເຂົາ ເພື່ອຮັບການຕອບແທນໃນວັນກິຍາມະຫ໌.

ແທ້ຈິງແລ້ວ ອັລລໍຫ໌ນັ້ນຊົງອານຸພາບເໜືອທຸກສັບພະສິ່ງ, ແລະ ມັນຄືຄວາມອະທຳ ແລະຄວາມບໍ່ຍຸດຕິທຳ ທີ່ຊີວິດຂອງຜູ້ກົດຂີ່ ແລະ ຜູ້ຖືກກົດຂີ່ຈະສິ້ນສຸດລົງ ໂດຍປາສະຈາກການສອບສວນ ແລະ ການຕອບແທນ.

ມະນຸດອາດຈະຕັ້ງຄຳຖາມວ່າ ເປັນຫຍັງຈຶ່ງຕ້ອງເປັນສາສະໜາອິສລາມ ແລະ ບໍ່ແມ່ນສາສະໜາອື່ນໆ?

ສິ່ງທີ່ເຮັດໃຫ້ມະນຸດແຕກຕ່າງຈາກສັບພະສິ່ງຖືກສ້າງທັງຫຼາຍຢ່າງເດັ່ນຊັດທີ່ສຸດນັ້ນກໍຄື ສະຕິປັນຍາ, ເຊິ່ງມີໜ້າທີ່ໃນການຄິດໄຕ່ຕອງ ແລະ ສະແຫວງຫາຄວາມຈິງ.

ອິສລາມຄືສາສະໜາທີ່ສອດຄ່ອງກັບສາມັນສຳນຶກ ແລະ ທຳມະຊາດອັນບໍລິສຸດ,
ໂດຍໄດ້ໃຫ້ຄຳຕອບທີ່ສົມເຫດສົມຜົນຕໍ່ຄຳຖາມທີ່ຍິ່ງໃຫຍ່ກ່ຽວກັບການມີຕົວຕົນ: ເປັນຫຍັງພວກເຮົາຈຶ່ງຢູ່ທີ່ນີ້? ຈຸດປະສົງຂອງການມີຊີວິດຂອງພວກເຮົາແມ່ນຫຍັງ? ແລະ ຊະຕາກຳຫຼັງຄວາມຕາຍແມ່ນຫຍັງ?

ອິສລາມຕັ້ງຢູ່ເທິງພື້ນຖານຂອງການມອບການເຄົາລົບພັກດີຕໍ່ຜູ້ສ້າງພຽງອົງດຽວ ແລະ ການປະຕິຍານວ່າບໍ່ມີຜູ້ທີ່ຄວນໄດ້ຮັບການເຄົາລົບພັກດີອື່ນໃດນອກຈາກອັລລໍຫ໌, ເຊິ່ງການປະຕິຍານນີ້ເປັນຄຳປະຕິຍານທຳອິດ ແລະ ເປັນຮາກຖານຂອງການສັດທາໃນອິສລາມ, ໝາຍຄວາມວ່າບໍ່ມີຜູ້ທີ່ສົມຄວນໄດ້ຮັບການເຄົາລົບພັກດີຢ່າງແທ້ຈິງນອກຈາກອັລລໍຫ໌ພຽງອົງດຽວ.

ແລະ ຄຳປະຕິຍານນີ້ ປະກອບດ້ວຍ:

ເຕົາຮີດ:
ຄືການເຊື່ອສັດທາຕໍ່ພຣະເຈົ້າທີ່ສົມຄວນແກ່ການເຄົາລົບພັກດີພຽງພຣະອົງດຽວ, ບໍ່ມີຜູ້ອື່ນຮ່ວມພາຄີກັບພຣະອົງ, ພຣະອົງບໍ່ມີບຸດ, ແລະ ບໍ່ມີສິ່ງໃດສະເໝີເໝືອນພຣະອົງ.

ການປະກາດຕົນບໍ່ກ່ຽວຂ້ອງກັບຊີຣິກ:
ຄືການປະຕິເສດບັນດາຮູບປັ້ນ ແລະ ພະເຈົ້າທັງຫຼາຍທີ່ມະນຸດສ້າງຂຶ້ນ.

ສາສະໜາອິດສະລາມໄດ້ກຳນົດໃຫ້ມີການສັດທາຕໍ່ສາດສະດາທຸກທ່ານ,
ດັ່ງນັ້ນຊາວມຸສລິມຈຶ່ງເຊື່ອຕາມທີ່ອັລລໍຫ໌ໄດ້ກ່າວໄວ້ໃນຄຳພີກຸຣອານວ່າ ພຣະເຍຊູຄືບ່າວຂອງອັລລໍຫ໌ ແລະ ເປັນສາດສະດາທູດຂອງພຣະອົງ, ແລະ ທ່ານບໍ່ແມ່ນລູກຂອງພຣະເຈົ້າ; ເພາະວ່າອັລລໍຫ໌ນັ້ນຍິ່ງໃຫຍ່ ແລະ ພຣະອົງຊົງຢູ່ເໜືອການທີ່ຈະມີພັນລະຍາ ຫຼື ລູກ, ໂດຍທີ່ພຣະອົງບໍ່ຈຳເປັນຕ້ອງເພິ່ງພາກັບສິ່ງໃດໆ ທັງສິ້ນ.
ອັລລໍຫ໌ໄດ້ບອກພວກເຮົາໃນຄຳພີກຸຣອານວ່າ
ພຣະເຍຊູເປັນສາດສະດາພຽງທ່ານໜຶ່ງທີ່ພຣະອົງໄດ້ປະທານປາຕິຫານຫຼາຍຢ່າງໃຫ້ແກ່ທ່ານ ແລະ ໄດ້ສົ່ງທ່ານມາເພື່ອເຊີນຊວນຜູ້ຄົນຂອງທ່ານໃຫ້ນັບຖືບູຊາອັລລໍຫ໌ພຽງຜູ້ດຽວບໍ່ມີຜູ້ອື່ນມາທຽບຄຽງ.
ພຣະອົງຍັງໄດ້ບອກອີກວ່າ
ພຣະເຍຊູບໍ່ໄດ້ຮຽກຮ້ອງໃຫ້ຜູ້ຄົນມາເຄົາລົບບູຊາຕົນເອງ ແຕ່ກັບກັນນັ້ນໂຕຂອງທ່ານເອງກໍ່ໄດ້ເຄົາລົບບູຊາພຣະຜູ້ສ້າງຂອງທ່ານ; ດັ່ງນັ້ນ ຖ້າຫາກເຈົ້າຕ້ອງການທີ່ຈະເປັນຜູ້ສັດທາຕໍ່ພຣະເຍຊູຢ່າງແທ້ຈິງໃນແບບທີ່ອັລລໍຫ໌ພໍພຣະໄທແລ້ວ,
ທ່ານກໍ່ຕ້ອງເຂົ້າມາຮັບເອົາສາສະໜາອິດສະລາມ.

ອັລລໍຫ໌ໄດ້ບອກເຮົາໃນອັລກຸຣອານວ່າ ພະເຍຊູໄດ້ສັ່ງສອນປະຊາຊົນຂອງທ່ານໃຫ້ເຄົາລົບບູຊາຕໍ່ອັລລໍຫ໌ພຽງຜູ້ດຽວ ແລະ ໄດ້ເຕືອນພວກເຂົາບໍ່ໃຫ້ບູຊາສິ່ງອື່ນໃດທຽບຄຽງກັບພຣະອົງ.

ມັນສົມເຫດສົມຜົນບໍ່ ທີ່ຄົນທີ່ມີສະຕິປັນຍາຈະບູຊາສິ່ງມີຊີວິດທີ່ຄ້າຍຄືກັບຕົນເອງ, ທີ່ຫິວແລະ ກະຫາຍ ແລະ ບໍ່ສາມາດປ້ອງກັນຕົນເອງຈາກຄວາມຕາຍ ຫຼື ໄພອັນຕະລາຍໄດ້?ມະນຸດເອີຍ!!! ເຈົ້າຈະບູຊາພະເຍຊູ ບຸດຂອງນາງມາຣີຍໍາ ໄດ້ແນວໃດ ໃນເມື່ອທ່ານເປັນພຽງມະນຸດຄົນໜຶ່ງທີ່ຕ້ອງການອາຫານ ແລະ ເຄື່ອງດື່ມ, ແລະ ເຄີຍຫັນໜ້າໄປຫາຜູ້ສ້າງຂອງຕົນເພື່ອອະທິຖານ! ສະຕິປັນຍາຈະສາມາດຈິນຕະນາການໄດ້ບໍວ່າ ພຣະເຈົ້າຈະອະທິຖານໃຫ້ຕົວເອງ? ບໍ່ແມ່ນດອກລືວ່າ ອັລລໍຫ໌ຄືຜູ້ຊົງມີຄຸນລັກສະນະແຫ່ງຄວາມຍິ່ງໃຫຍ່, ຊົງເປັນໜຶ່ງດຽວໃນຄວາມສົມບູນແບບຂອງພຣະອົງ, ປາສະຈາກສິ່ງປຽບທຽບແລະສິ່ງທີ່ຄ້າຍຄື, ແລະ ທຸກສິ່ງໃນຈັກກະວານລ້ວນຢູ່ພາຍໃຕ້ອໍານາດແລະການປົກຄອງຂອງພຣະອົງ?

ມັນຈະເປັນໄປໄດ້ແນວໃດ ທີ່ຜູ້ສ້າງຊັ້ນຟ້າທັງຫຼາຍ ແລະ ແຜ່ນດິນ ຈະຫຼຸດຕົວລົງມາເກີດເປັນເດັກນ້ອຍ, ຈາກນັ້ນກໍມອບຕົວເອງໃຫ້ກັບສິ່ງທີ່ພຣະອົງສ້າງເພື່ອໃຫ້ພວກເຂົາຄຶງທ່ານໄວ້ເທິງໄມ້ກາງແຂນ?

ແທ້ຈິງແລ້ວ ຜູ້ທີ່ຖືກຄຶງ ແລະ ຖືກຂ້າຄືມະນຸດທີ່ຕ້ອງຕາຍ, ສ່ວນຜູ້ສ້າງນັ້ນ ພຣະອົງຄືຜູ້ຊົງມີຊີວິດນິລັນ ຜູ້ທີ່ບໍ່ຕາຍ, ຜູ້ຊົງດໍາລົງຢູ່ດ້ວຍພຣະອົງເອງ ທີ່ບໍ່ເຄີຍເງົານອນ ແລະ ບໍ່ເຄີຍນອນ.

ມັນບໍ່ແມ່ນສ່ວນໜຶ່ງຂອງຄວາມສົມບູນໃນຄວາມຍິ່ງໃຫຍ່

ແລະ ສະຫງ່າງາມຂອງພຣະອົງບໍ່ທີ່ຈະຕ້ອງປາສະຈາກເລື່ອງເຊັ່ນນີ້?

ອັລລໍຫ໌ໄດ້ບອກພວກເຮົາໃນພຣະມະຫາຄໍາພີອັລກຸຣອານວ່າ ສາດສະດາທູດທຸກທ່ານໄດ້ນໍາເອົາຄໍາສອນອັນດຽວກັນມາຄືການຮຽກຮ້ອງປະຊາຊາດຂອງພວກເຂົາໄປສູ່ການເຄົາລົບບູຊາຕໍ່ອັລລໍຫ໌ພຽງຜູ້ດຽວ ບໍ່ໃຫ້ມີສິ່ງອື່ນທຽບຄຽງໄດ້. ແຕ່ເມື່ອເວລາຜ່ານໄປ ບາງຄົນຂອງພວກເຂົາເອງໄດ້ບິດເບືອນຄໍາສອນອັນເປັນອໍານະຕະນີ້, ພວກເຂົາໄດ້ດັບແສງສະຫວ່າງແຫ່ງການນັບຖືອັລລໍຫ໌ອົງດຽວທີ່ບັນດາສາດສະດາໄດ້ນໍາມາ.

ດັ່ງນັ້ນ ອັລລໍຫ໌ຈຶ່ງໄດ້ສົ່ງສາດສະດາທ່ານສຸດທ້າຍຄືນະບີມຸຮັມມັດ ມາ ແລະ ໄດ້ປະທານພຣະມະຫາຄໍາພີອັລກຸຣອານລົງມາໃຫ້ແກ່ທ່ານເພື່ອຟື້ນຟູຄໍາສອນເລື່ອງການນັບຖືຕໍ່ອັລລໍຫ໌ອົງດຽວທີ່ບັນດາສາດສະດາທູດທຸກທ່ານກ່ອນໜ້ານີ້ໄດ້ນໍາມາ.

## ແລະ ໃນບົດສົ່ງທ້າຍນີ້ ຂໍກ່າວແກ່ມະນຸດທັງຫຼາຍວ່າ:

ແທ້ຈິງສາສະໜາອິສລາມແມ່ນສາສະໜາແຫ່ງສະຕິປັນຍາ ແລະ ທໍາມະຊາດດັ້ງເດີມ, ແລະ ເປັນສາສະໜາດຽວທີ່ພຣະຜູ້ສ້າງຜູ້ຍິ່ງໃຫຍ່ໄດ້ຊົງກໍານົດໃຫ້ແກ່ມວນມະນຸດ;

ສະນັ້ນ ຈຶ່ງເປັນສິ່ງຈໍາເປັນສໍາລັບທຸກຄົນທີ່ມີສະຕິປັນຍາທີ່ຈະຕ້ອງຮີບຮ້ອນເຂົ້າຮັບສາສະໜາອິສລາມ ໂດຍການສັດທາຕໍ່ອັລລໍຫ໌ວ່າພຣະອົງຄືພຣະຜູ້ອະພິບານ, ແລະ ສັດທາວ່າອິສລາມຄືສາສະໜາຂອງຕົນ, ແລະ

ສັດທາໃນມຸຮໍາມັດວ່າເປັນສາສະນະທູດ, ແລະ ນີ້ຄືສິ່ງຈໍາເປັນທີ່ມະນຸດບໍ່ສາມາດປະຕິເສດໄດ້; ເພາະວ່າອັລລໍຫ໌ຈະຊົງສອບສວນເຂົາໃນວັນກີຍາມະຫ໌ກ່ຽວກັບການຕອບຮັບຕໍ່ບັນດາສາສະນະທູດ;

ໃຜກໍຕາມທີ່ເປັນຜູ້ສັດທາ ລາວຈະໄດ້ຮັບໄຊຊະນະ ແລະ ຄວາມສໍາເລັດຢ່າງໃຫຍ່, ແລະ ໃຜກໍຕາມທີ່ເປັນຜູ້ປະຕິເສດຄວາມສັດທາ ລາວຈະຕ້ອງປະສົບກັບການຂາດທຶນຢ່າງຊັດເຈນ.

ຖ້າຫາກທ່ານກໍາລັງຊອກຫາຄວາມສຸກທີ່ແທ້ຈິງໃນໂລກນີ້ ແລະ ໄຊຊະນະໃນໂລກໜ້າ, ກໍ່ຈົ່ງຮູ້ໄວ້ວ່າການຕັດສິນໃຈທີ່ຍິ່ງໃຫຍ່ທີ່ສຸດທີ່ທ່ານສາມາດເຮັດໄດ້ໃນຊີວິດຂອງທ່ານກໍ່ຄືການເຂົ້າຮັບອິສລາມ. ສິ່ງທີ່ທ່ານຕ້ອງເຮັດກໍຄືການກ່າວຄໍາເວົ້າເຫຼົ່ານີ້ດ້ວຍຫົວໃຈທີ່ຈິງໃຈ ແລະ ເຊື່ອໝັ້ນ: “ອັຊຮະດຸ ອັລລາ ອີລາຮະ ອິລລັລລໍຫ໌, ວະອັຊຮະດຸ ອັນນະ ມຸຮໍາມະດັນ ຣໍສູລຸລລໍຫ໌” (ຂ້ອຍຂໍປະຕິຍານວ່າ ບໍ່ມີພຣະເຈົ້າອື່ນໃດທີ່ຄວນແກ່ການເຄົາລົບພັກດີຢ່າງແທ້ຈິງ ນອກຈາກອັລລໍຫ໌, ແລະ ຂ້ອຍຂໍປະຕິຍານວ່າມຸຮໍາມັດເປັນສາສະນະທູດຂອງອັລລໍຫ໌),

ຈາກນັ້ນກໍ່ເລີ່ມສຶກສາສາສະໜາຂອງທ່ານ ແລະ ປະຕິບັດຕາມສິ່ງທີ່ຄໍາປະຕິຍານທັງສອງໄດ້ກໍານົດໄວ້ ຄືການສັດທາຕໍ່ອັລລໍຫ໌ ແລະ ສາສະນະທູດຂອງພຣະອົງ ພ້ອມທັງການຍຶດໝັ້ນໃນຫຼັກການປະຕິບັດຂອງອິສລາມ.

ຈົ່ງກ່າວມັນອອກມາໃນຕອນນີ້, ຢ່າໄດ້ລັງເລໃຈ; ເພາະຄວາມຕາຍນັ້ນອາດຈະມາເຖິງຢ່າງກະທັນຫັນ,

ດັ່ງນັ້ນຢ່າເລື່ອນການຕັດສິນໃຈທີ່ສຳຄັນຍິ່ງນີ້, ຢ່າເປີດໂອກາດໃຫ້ມານຮ້າຍໄຊຕອນມາຫັນເຫເຮົາອອກຈາກຄວາມດີງາມ, ຈົ່ງກ້າຫານ, ແລະ ເລີ່ມຕົ້ນເສັ້ນທາງຂອງເຮົາສູ່ແສງສະຫວ່າງ ແລະ ແນວທາງທີ່ຖືກຕ້ອງ.

ຈົ່ງຕັດສິນໃຈດຽວນີ້, ແລະ ເລີ່ມຕົ້ນຊີວິດໃໝ່ທີ່ເຕັມໄປດ້ວຍຄວາມສະຫງົບສຸກ ແລະ ຄວາມພໍໃຈ.

ຂ້ອຍຂໍປະຕິຍານວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌, ແລະ ຂ້ອຍຂໍປະຕິຍານວ່າ ມຸຮຳມັດນັ້ນເປັນຣໍສູລຂອງອັລລໍຫ໌

# الفهرس

ເຈົ້າເຄີຍຖາມຕົວເອງບໍ່? ໃຜແມ່ນຜູ້ສ້າງໂຕເຈົ້າ? ແລ້ວສ້າງມາເພື່ອຫຍັງ? ແລ້ວຈະມີຫຍັງເກີດຂຶ້ນຫລັງຈາກຄວາມຕາຍ? ........................................ 2
ເຈົ້າເຄີຍຖາມຕົວເອງບໍ່? ໃຜແມ່ນຜູ້ສ້າງໂຕເຈົ້າ? ແລ້ວສ້າງມາເພື່ອຫຍັງ? ແລ້ວຈະມີຫຍັງເກີດຂຶ້ນຫລັງຈາກຄວາມຕາຍ? ........................................ 2
ແລະ ໃນບົດສົ່ງທ້າຍນີ້ ຂໍກ່າວແກ່ມະນຸດທັ້ງຫຼາຍວ່າ: .............................. 17

lo459v2.0 - 06/09/2026